ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 10 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 09 ພະຈິກ 2005

# ກົດໝາຍ
# ວ່າດ້ວຍການທ່ອງທ່ຽວ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການທ່ອງທ່ຽວ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງການທ່ອງທ່ຽວ ແນໃສ່ສົ່ງເສີມ ແລະ ພັດທະນາການທ່ອງທ່ຽວທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ໃຫ້ຂະຫຍາຍຕົວ, ຍືນຍົງ ກາຍເປັນອຸດສາຫະກຳທ່ອງທ່ຽວທີ່ທັນສະໄໝ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ, ສົ່ງເສີມຄວາມເຂົ້າໃຈຊຶ່ງກັນແລະກັນ, ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ພັດທະນາກັບສາກົນ.

**ມາດຕາ 2. ການທ່ອງທ່ຽວ**

ການທ່ອງທ່ຽວ ແມ່ນການເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫລື ປະເທດອື່ນເພື່ອການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນວັດທະນະທຳ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ ແລະອື່ນໆ ໂດຍບໍ່ມີຈຸດປະສົງຊອກເຮັດວຽກ, ປະກອບອາຊີບ ເພື່ອຫາລາຍໄດ້ໃນຮູບແບບຕ່າງໆ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆ ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

- **ນັກທ່ອງທ່ຽວ** ໝາຍເຖິງບຸກຄົນທີ່ເດີນທາງຈາກທີ່ຢູ່ອາໄສຂອງຕົນ ໄປທ້ອງຖິ່ນ ອື່ນ ຫລື ປະເທດອື່ນ ເພື່ອຈຸດປະສົງທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງກົດໝາຍສະບັບນີ້;

- **ກິດຈະການທ່ອງທ່ຽວ** ໝາຍເຖິງການຈັດຕັ້ງ ແລະ ການເຄື່ອນໄຫວຕ່າງໆ ເພື່ອໃຫ້ການບໍລິການແກ່ນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດເຊັ່ນ: ແຫລ່ງທ່ອງທ່ຽວ, ສະຖານທີ່ພັກແຮມ, ການນຳທ່ຽວ;
- **ທຸລະກິດທ່ອງທ່ຽວ** ໝາຍເຖິງການບໍລິການຂອງຫົວໜ່ວຍທຸລະກິດ ທາງດ້ານການເດີນທາງ, ອາຫານ, ການພັກແຮມ, ການນຳທ່ຽວ ແລະອື່ນໆ ໃຫ້ແກ່ນັກທ່ອງທ່ຽວ;
- **ທຸລະກິດພັກແຮມ** ໝາຍເຖິງການບໍລິການຂອງຫົວໜ່ວຍທຸລະກິດ ໃຫ້ແກ່ນັກທ່ອງທ່ຽວໃນການພັກເຊົາຊົ່ວຄາວເຊັ່ນ: ພັກຢູ່ໂຮງແຮມ, ເຮືອນພັກ, ເຮືອທ່ອງທ່ຽວ, ຫ້ອງພັກ ແລະ ສະຖານທີ່ພັກເຊົາອື່ນໆ ທີ່ຈັດຫາໃຫ້ແກ່ນັກທ່ອງທ່ຽວໂດຍທົ່ວໄປ;
- **ໂຮງແຮມ** ໝາຍເຖິງສະຖານທີ່ພັກເຊົາຊົ່ວຄາວ ປະກອບດ້ວຍສິບຫ້າຫ້ອງນອນຂຶ້ນໄປ ຊຶ່ງມີສິ່ງອຳນວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ມີຄຸນນະພາບ ແລະ ການບໍລິການທີ່ມີມາດຕະຖານດີ ໂດຍມີຈຸດປະສົງດຳເນີນທຸລະກິດບໍລິການທີ່ພັກເຊົາຊົ່ວຄາວ ສຳລັບຄົນເດີນທາງໂດຍມີຄ່າບໍລິການ;
- **ເຮືອນພັກ** ໝາຍເຖິງສະຖານທີ່ພັກແຮມ, ປະກອບດ້ວຍ ສິບສີ່ ຫ້ອງນອນລົງມາ ແຕ່ບໍ່ຫລຸດຫ້າຫ້ອງນອນ, ຊຶ່ງມີສິ່ງອຳນວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ເໝາະສົມ ແລະ ການບໍລິການທີ່ມີມາດຕະຖານ ໂດຍມີຈຸດປະສົງດຳເນີນທຸລະກິດບໍລິການທີ່ພັກແຮມ ສຳລັບຄົນເດີນທາງໂດຍມີຄ່າບໍລິການ;
- **ຫ້ອງພັກ** ໝາຍເຖິງສະຖານທີ່ພັກເຊົາຊົ່ວຄາວທີ່ມີ ສີ່ ຫ້ອງນອນລົງມາ ແລະ ມີສິ່ງອຳນວຍຄວາມສະດວກອັນຈຳເປັນ ໃຫ້ແກ່ຄົນເດີນທາງ;
- **ບ່ອນພັກແຮມຕາມແຫລ່ງທ່ອງທ່ຽວ (ລີສອດ)** ໝາຍເຖິງສະຖານທີ່ພັກເຊົາຊົ່ວ ຄາວທີ່ສ້າງຕັ້ງຂຶ້ນຕາມແຫລ່ງທ່ອງທ່ຽວທຳມະຊາດ ຊຶ່ງມີສິ່ງອຳນວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ ທີ່ມີຄຸນນະພາບ ແລະ ການບໍລິການທີ່ມີມາດຕະຖານດີ;
- **ບ່ອນພັກແຮມຂອງນັກຂັບຂີ່ (ໂມເຕນ)** ໝາຍເຖິງສະຖານທີ່ພັກເຊົາຊົ່ວຄາວ ທີ່ສ້າງຕັ້ງຂຶ້ນຕາມແຄມຖະໜົນຫລວງ ສຳລັບຜູ້ເດີນທາງທີ່ນຳໃຊ້ຍານພາຫະນະ ຊຶ່ງມີສະຖານທີ່ຈອດລົດ ແລະ ສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ;
- **ບ່ອນພັກແຮມເຄື່ອນທີ່** ໝາຍເຖິງສະຖານທີ່ພັກເຊົາຊົ່ວຄາວ ທີ່ເຄື່ອນຍ້າຍໄປມາໄດ້, ປະກອບດ້ວຍ: ເຮືອທ່ອງທ່ຽວ, ຕູ້ລົດໄຟ, ລົດທ່ອງທ່ຽວທີ່ມີຫ້ອງນອນ ແລະ ອື່ນໆ ຊຶ່ງມີສິ່ງອຳນວຍຄວາມສະດວກ ແລະ ການບໍລິການທີ່ເໝາະສົມ;
- **ຄ້າຍພັກແຮມ (ແຄ້ມ)** ໝາຍເຖິງສະຖານທີ່ພັກເຊົາຊົ່ວຄາວ ຢູ່ໃນແຫລ່ງທ່ອງທ່ຽວທຳມະຊາດທີ່ສວຍງາມ ຊຶ່ງຈັດຂຶ້ນເພື່ອໃຫ້ນັກທ່ອງທ່ຽວເຊົ່າກາງຕູບຜ້າ (ເຕັນ) ແລະ ມີສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ;
- **ພະນັກງານນຳທ່ຽວ** ໝາຍເຖິງບຸກຄົນທີ່ບໍລິການພານັກທ່ອງທ່ຽວໄປທ່ຽວຊົມສະຖານທີ່ທ່ອງທ່ຽວຕ່າງໆ ແລະ ມີໜ້າທີ່ອະທິບາຍ, ບັນລະຍາຍ, ໃຫ້ຂໍ້ມູນ, ຄວາມຮູ້ແກ່ນັກທ່ອງທ່ຽວກ່ຽວກັບສະຖານທີ່ນັ້ນໆຢ່າງຖືກຕ້ອງ ແລະ ອຳນວຍຄວາມສະດວກອື່ນໆ ຕາມລາຍການທີ່ກຳນົດໄວ້;

- **ຮ້ານອາຫານ** ໝາຍເຖິງສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ ຊຶ່ງຮັບປະກັນ ຄວາມງາມ, ຄວາມສະອາດຂອງສະຖານທີ່, ອາຫານມີຄຸນນະພາບ, ປອດໄພ ແລະ ການບໍລິການມີລະດັບ ແລະ ມາດຕະຖານທີ່ແນ່ນອນ;
- **ຊັບພະຍາກອນທ່ອງທ່ຽວ** ໝາຍເຖິງທ່າແຮງທາງດ້ານການທ່ອງທ່ຽວ ທີ່ເກີດຂຶ້ນໂດຍ ທໍາມະຊາດ ຫລື ມະນຸດສ້າງຂຶ້ນ;
- **ແຫລ່ງທ່ອງທ່ຽວ** ໝາຍເຖິງທ່າແຮງທາງດ້ານການທ່ອງທ່ຽວ ທີ່ໄດ້ຮັບການພັດທະນາ ໃຫ້ເປັນສະຖານທີ່ທ່ອງທ່ຽວ ຊຶ່ງສາມາດດຶງດູດນັກທ່ອງທ່ຽວ ໃຫ້ເດີນທາງມາທ່ຽວຊົມ;
- **ອຸດສາຫະກໍາທ່ອງທ່ຽວ** ໝາຍເຖິງການບໍລິການ ແກ່ນັກທ່ອງທ່ຽວພາຍໃນ ແລະ ຕ່າງ ປະເທດ ຢ່າງເປັນລະບົບຄົບວົງຈອນ ຊຶ່ງປະກອບດ້ວຍ: ທຸລະກິດຂົນສົ່ງ, ແຫຼ່ງທ່ອງ ທ່ຽວ, ນໍາທ່ຽວ, ທີ່ພັກແຮມ, ອາຫານ, ເຄື່ອງທີ່ລະນຶກ, ການວາງສະແດງ, ນິທັດສະ ການ, ເທດສະການ, ງານບຸນ ແລະ ອື່ນໆ ຊຶ່ງນໍາໃຊ້ແຮງງານ, ມີການລົງທຶນ ແລະ ວິຊາສະເພາະສູງ, ໃຊ້ເຕັກນິກທີ່ທັນສະໄໝ, ມີການວາງແຜນ, ການຕະຫຼາດ ແລະ ການຈັດຕັ້ງຢ່າງເປັນລະບົບ.

### ມາດຕາ 4. ນະໂຍບາຍຂອງລັດ ກ່ຽວກັບການທ່ອງທ່ຽວ

ລັດຄຸ້ມຄອງຢ່າງລວມສູນເປັນເອກະພາບໃນທົ່ວປະເທດ ຕໍ່ການອະນຸລັກ, ປົກປັກຮັກສາ ແລະ ພັດທະນາການທ່ອງທ່ຽວທາງດ້ານວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດແບບຍືນ ຍົງ ໂດຍມີສ່ວນຮ່ວມຂອງຊຸມຊົນ.

ລັດຖືເອົາການທ່ອງທ່ຽວ ເປັນອົງປະກອບຂອງເສດຖະກິດແຫ່ງຊາດ ເພື່ອສົ່ງເສີມການ ຜະລິດ, ການບໍລິການ, ເພີ່ມທະວີການສົ່ງອອກກັບທີ່, ສ້າງວຽກເຮັດງານທໍາ, ສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ໃຫ້ແກ່ປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ.

ລັດ ແລະ ສັງຄົມ ສົ່ງເສີມການໂຄສະນາກິດຈະກໍາ, ນິທັດສະການ, ເທດສະການ, ງານບຸນ ກ່ຽວກັບສິລະປະວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງຊາດ, ມູນເຊື້ອພິລະອາດ ຫານຂອງປະຊາຊົນລາວບັນດາເຜົ່າ ເພື່ອຊຸກຍູ້ການທ່ອງທ່ຽວພາຍໃນ ແລະ ດຶງດູດນັກທ່ອງທ່ຽວ ຕ່າງປະເທດ.

ລັດເຄົາລົບ, ປົກປ້ອງສິດຜົນປະໂຫຍດອັນຊອບທໍາ ລວມທັງຮັບປະກັນຄວາມປອດໄພ ໃຫ້ແກ່ນັກທ່ອງທ່ຽວ.

ລັດ ເອົາໃຈໃສ່ ສ້າງເງື່ອນໄຂອໍານວຍຄວາມສະດວກ ແລະ ປົກປ້ອງສິດ, ຜົນປະໂຫຍດ ຂອງບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ລົງທຶນເຂົ້າໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ.

### ມາດຕາ 5. ພັນທະຂອງບຸກຄົນ ແລະ ການຈັດຕັ້ງ

ເພື່ອເປັນການສົ່ງເສີມການທ່ອງທ່ຽວ ບຸກຄົນ ແລະ ການຈັດຕັ້ງພາຍໃນ ລ້ວນແຕ່ມີພັນ ທະປະກອບສ່ວນເຂົ້າໃນການອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ສົ່ງເສີມວັດທະນະທໍາ,

ຮີດຄອງປະເພນີອັນດີງາມ, ສິນລະປະ, ວັນນະຄະດີ, ຫັດຖະກຳ ທີ່ເປັນເອກະລັກສະເພາະ, ຊັບພະຍາກອນທ່ອງທ່ຽວ, ສິ່ງແວດລ້ອມອັນອຸດົມຮັ່ງມີ ແລະ ສວຍງາມຂອງຊາດ.

ບຸກຄົນ ແລະ ການຈັດຕັ້ງຕ່າງປະເທດ ທີ່ເຂົ້າມາ ສປປ ລາວ ກໍມີພັນທະປະກອບສ່ວນໃນການປົກປັກຮັກສາແຫລ່ງທ່ອງທ່ຽວ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງລາວເຊັ່ນດຽວກັນ.

**ມາດຕາ 6. ການຮ່ວມມືສາກົນ**

ລັດຊຸກຍູ້ການພົວພັນ, ຮ່ວມມືກັບສາກົນທາງດ້ານການທ່ອງທ່ຽວ ເພື່ອແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ກໍ່ສ້າງ, ຝຶກອົບຮົມພະນັກງານ, ຍາດແຍ່ງການຊ່ວຍເຫລືອ, ສົ່ງເສີມການລົງທຶນ, ໂຄສະນາການທ່ອງທ່ຽວຂອງລາວ ເພື່ອເຮັດໃຫ້ການທ່ອງທ່ຽວໄດ້ຮັບການພັດທະນາ ແລະ ການບໍລິການການທ່ອງທ່ຽວໄດ້ມາດຕະຖານສາກົນ.

## ພາກທີ II
## ຊັບພະຍາກອນທ່ອງທ່ຽວ

### ໝວດທີ 1
### ປະເພດຊັບພະຍາກອນທ່ອງທ່ຽວ

**ມາດຕາ 7. ປະເພດຊັບພະຍາກອນທ່ອງທ່ຽວ**

**ຊັບພະຍາກອນທ່ອງທ່ຽວແບ່ງອອກເປັນ ສອງ ປະເພດຄື:**

- ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ;
- ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ.

**ມາດຕາ 8. ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ**

ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ ປະກອບດ້ວຍ: ທັດສະນີຍະພາບ, ຜາ, ຖ້ຳ, ພູພຽງ, ພູສູງ, ພູໄຟ, ທົ່ງພຽງ, ປ່າໄມ້, ພືດພັນ, ສັດປ່າ, ສັດນ້ຳ, ແມງໄມ້, ດອກໄມ້, ແມ່ນ້ຳ, ດອນ, ຫາດຊາຍ, ໜອງ, ບຶງ, ນ້ຳຕົກຕາດ, ແກ້ງ, ບໍ່ນ້ຳຮ້ອນ, ປາກົດການທຳມະຊາດ ແລະ ອື່ນໆ.

**ມາດຕາ 9. ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ**

ຊັບພະຍາກອນທ່ອງທ່ຽວ ທີ່ມະນຸດສ້າງຂຶ້ນ ປະກອບດ້ວຍ:

- ຊັບພະຍາກອນທ່ອງທ່ຽວທາງດ້ານວັດທະນະທຳເຊັ່ນ: ສິລະປະກຳ, ສະຖາປັດຕະຍະກຳ, ປູຊະນີຍະສະຖານ, ບູຮານວັດຖຸ, ບູຮານສະຖານ, ວັດວາອາຮາມ, ອາຄານບ້ານເຮືອນ, ສິນລະປະວັນນະຄະດີ, ນິທັດສະການ, ເທດສະການ, ງານບຸນ ແລະ ພິທີກຳຕ່າງໆ, ວິຖີຊີວິດ, ສູນການຄ້າ, ສູນວາງສະແດງ;

- ຊັບພະຍາກອນທ່ອງທ່ຽວທາງດ້ານປະຫວັດສາດ ເຊັ່ນ: ຫໍພິພິດທະພັນ, ອະນຸສອນສະຖານ, ຫໍໂຮງ, ສະຖານທີ່ເກີດ, ອາໄສ ແລະ ເຮັດວຽກຂອງບຸກຄົນສຳຄັນ, ຮ່ອງຮອຍສະໝໍລະພູມ;
- ຊັບພະຍາກອນທ່ອງທ່ຽວທີ່ຄົນສ້າງຂຶ້ນຕາມແບບທຳມະຊາດ ເຊັ່ນ: ສວນອຸທິຍານ, ສວນສະໜຸກ, ສວນສັດ, ສະຖານທີ່ຈຳລອງ.

## ໝວດທີ 2
## ແຫລ່ງທ່ອງທ່ຽວ

### ມາດຕາ 10. ການສຳຫລວດ ແລະ ຂຶ້ນທະບຽນແຫລ່ງທ່ອງທ່ຽວ

ລັດ ສຳຫລວດ, ເກັບກຳ, ຂຶ້ນທະບຽນ, ຄົ້ນຄວ້າຮຽບຮຽງປະຫວັດແຫລ່ງທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

### ມາດຕາ 11. ການຈັດລະດັບແຫລ່ງທ່ອງທ່ຽວ

**ແຫລ່ງທ່ອງທ່ຽວໃນ ສປປ ລາວ ແບ່ງອອກເປັນ ສອງ ລະດັບດັ່ງນີ້:**

- ລະດັບຊາດ;
- ລະດັບທ້ອງຖິ່ນ.

### ມາດຕາ 12. ແຫລ່ງທ່ອງທ່ຽວລະດັບຊາດ

ແຫລ່ງທ່ອງທ່ຽວລະດັບຊາດ ແມ່ນແຫລ່ງທ່ອງທ່ຽວ ຊຶ່ງເປັນມໍລະດົກລະດັບຊາດ, ພາກພື້ນ ຫລື ລະດັບໂລກ ທີ່ໄດ້ຮັບຄວາມນິຍົມສູງ, ສ້າງຄວາມສົນໃຈ ແລະ ດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຊົມເປັນຈຳນວນຫລາຍ ແລະ ເປັນທີ່ຮູ້ຈັກຢ່າງກວ້າງຂວາງ, ມີພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ ແກ່ນັກທ່ອງທ່ຽວ ແລະ ມີຄວາມສຳຄັນໃນການສ້າງລາຍໄດ້ໃຫ້ແກ່ການທ່ອງທ່ຽວ ເຊັ່ນ: ເມືອງຫລວງພະບາງ, ວັດຊຽງທອງ, ພະທາດຫລວງ, ຫໍພະແກ້ວ, ຖ້ຳເມືອງວຽງໄຊ, ວັດພູຈຳປະສັກ, ທົ່ງໄຫຫີນ, ຄອນພະເພັງ ແລະ ອື່ນໆ.

### ມາດຕາ 13. ແຫລ່ງທ່ອງທ່ຽວລະດັບທ້ອງຖິ່ນ

ແຫລ່ງທ່ອງທ່ຽວລະດັບທ້ອງຖິ່ນແມ່ນ ແຫລ່ງທ່ອງທ່ຽວທີ່ສ້າງຄວາມສົນໃຈ ແລະ ດຶງດູດນັກທ່ອງທ່ຽວພາຍໃນປະເທດເປັນສ່ວນຫຼາຍ, ມີພື້ນທີ່ຊຶ່ງຈະສາມາດພັດທະນາໄດ້, ມີສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ ແລະ ມີຄວາມສຳຄັນໃນການສ້າງລາຍໄດ້ໃຫ້ແກ່ທ້ອງຖິ່ນ.

ແຫລ່ງທ່ອງທ່ຽວລະດັບທ້ອງຖິ່ນ ກວມເອົາແຫລ່ງທ່ອງທ່ຽວລະດັບແຂວງ, ເມືອງ ແລະລະດັບຊຸມຊົນ ເຊັ່ນ: ຕາດເລາະ, ຖ້ຳຈັງ, ຕາດມູນ.

## ພາກທີ III
## ກິດຈະການ ການທ່ອງທ່ຽວ

## ໝວດທີ 1
## ການໂຄສະນາການທ່ອງທ່ຽວ

**ມາດຕາ 14. ຈຸດປະສົງ**

ການໂຄສະນາ ມີຈຸດປະສົງເຮັດໃຫ້ພົນລະເມືອງເຂົ້າໃຈຄວາມສຳຄັນ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສົ່ງເສີມການທ່ອງທ່ຽວ, ເຮັດໃຫ້ນັກທ່ອງທ່ຽວພາຍໃນມີຄວາມທະນົງໃຈ ເດີນທາງໄປທ່ຽວຊົມປະເທດຕົນ ແລະ ເຮັດໃຫ້ນັກທ່ອງທ່ຽວຕ່າງປະເທດ ຮູ້ຈັກ ສປປ ລາວ ເປັນຈຸດທ່ອງທ່ຽວທີ່ໜ້າສົນໃຈ, ຕ້ອງການມາທ່ຽວຊົມ ແລະ ສຶກສາຮຽນຮູ້, ທັງເປັນການເປີດກວ້າງຕະຫລາດການທ່ອງທ່ຽວຂອງລາວ ໃຫ້ນັບມື້ນັບກວ້າງຂວາງ.

**ມາດຕາ 15. ເນື້ອໃນການໂຄສະນາ**

ການໂຄສະນາການທ່ອງທ່ຽວ ຕ້ອງເລັ່ງໃສ່ເຜີຍແຜ່ຄວາມສວຍງາມ, ຄວາມໂດດເດັ່ນຂອງຊັບພະຍາກອນ ແລະ ຜະລິດຕະພັນທ່ອງທ່ຽວທີ່ມີເອກະລັກຂອງຊາດ ທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ, ການບໍລິການ ທີ່ມີລັກສະນະດຶງດູດ ແລະ ສ້າງຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ.

ຄຳຂວັນການທ່ອງທ່ຽວຂອງ ສປປ ລາວ ໃນປັດຈຸບັນແມ່ນ “ ປະເທດລາວ ດິນແດນອັນຍະມະນີແຫ່ງແມ່ນ້ຳຂອງ ”.

**ມາດຕາ16. ຮູບການ ແລະ ວິທີການໂຄສະນາ**

ການໂຄສະນາການທ່ອງທ່ຽວ ນຳໃຊ້ຮູບການ ແລະ ວິທີການດັ່ງນີ້:

- ນິທັດສະການ, ເທດສະການ, ງານບຸນ, ງານວາງສະແດງຕະຫລາດນັດທ່ອງທ່ຽວ ລະດັບທ້ອງຖິ່ນ, ລະດັບຊາດ, ລະດັບພາກພື້ນ ຫລື ສາກົນ;
- ຜ່ານລະບົບສື່ມວນຊົນພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
- ຜ່ານການປະຊາສຳພັນ:ງານບຸນ, ກິດຈະກຳສົ່ງເສີມການທ່ອງທ່ຽວອື່ນໆ;
- ອຸປະກອນ ແລະ ສິ່ງພິມໂຄສະນາຕ່າງໆ;
- ຮູບການ ແລະ ວິທີການອື່ນໆ ທີ່ເປັນການໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວລາວ.

## ໝວດທີ 2
## ການສື່ສານ ການທ່ອງທ່ຽວ

**ມາດຕາ 17. ອຸປະກອນສື່ສານ**

ລັດ ຊຸກຍູ້ ແລະ ສ້າງເງື່ອນໄຂ ອໍານວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ໃນການຕິດຕໍ່ສື່ສານພາຍໃນ ແລະ ຕ່າງປະເທດເຊັ່ນ: ໂທລະສັບ, ໂທລະສານ, ໂທລະ ພິມ, ໄປສະນີ, ອິນເຕີເນັດ ແລະ ອື່ນໆ.

**ມາດຕາ 18. ການສະໜອງຂໍ້ມູນຂ່າວສານ**

ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສະໜອງຂໍ້ມູນ, ຂ່າວສານກ່ຽວກັບການທ່ອງທ່ຽວໃຫ້ຖືກຕ້ອງ, ທັນການ ແລະ ເປັນລະບົບທາງດ້ານແຫຼ່ງທ່ອງທ່ຽວ, ການເດີນທາງ, ບ່ອນພັກແຮມ, ຮ້ານອາຫານ, ສິ່ງທີ່ຄວນ ແລະ ບໍ່ຄວນປະຕິບັດ ແລະ ອື່ນໆ.

**ມາດຕາ 19. ການແນະນໍາເຕືອນໄພ**

ອົງການທີ່ກ່ຽວຂ້ອງ ຕ້ອງໃຫ້ຂໍ້ມູນ, ຂ່າວສານ, ຊີ້ແຈງ ກ່ຽວກັບເຫດການ ສຸກເສີນທີ່ເກີດຂຶ້ນແລ້ວ ຫລື ອາດຈະເກີດຂຶ້ນ ຊຶ່ງສ້າງຜົນກະທົບຕໍ່ນັກທ່ອງທ່ຽວ, ພາບພົດການທ່ອງທ່ຽວ ພ້ອມທັງໃຫ້ຄໍາແນະນໍາກ່ຽວກັບມາດຕະການປ້ອງກັນຄວາມປອດໄພເຊັ່ນ: ກໍລະນີແຜ່ນດິນໄຫວ, ນໍ້າຖ້ວມ, ໄຟໄໝ້, ລົມພາຍຸ, ພະຍາດລະບາດ.

## ໝວດທີ 3
## ການຂົນສົ່ງທ່ອງທ່ຽວ

**ມາດຕາ 20. ພາຫານະຂົນສົ່ງ**

ພາຫານະຂົນສົ່ງນັກທ່ອງທ່ຽວປະກອບດ້ວຍ: ເຮືອບິນ, ລົດ, ເຮືອ ແລະ ພາຫານະຂົນສົ່ງອື່ນໆໂດຍອີງໃສ່ຄວາມຕ້ອງການຂອງນັກທ່ອງທ່ຽວ.

**ມາດຕາ 21. ມາດຖານພາຫານະຂົນສົ່ງ**

ພາຫານະຂົນສົ່ງນັກທ່ອງທ່ຽວ ຕ້ອງຮັບປະກັນທາງດ້ານຈໍານວນ ແລະ ມີຄຸນນະພາບດີ, ອາຍຸການນໍາໃຊ້ຖືກຕ້ອງຕາມເຕັກນິກທີ່ກໍານົດໄວ້, ຮັບປະກັນຄວາມປອດໄພ, ຄວາມສະອາດ ແລະ ການບໍລິການທີ່ດີ.

**ມາດຕາ 22. ການບໍລິການຂົນສົ່ງ**

ການບໍລິການຂົນສົ່ງນັກທ່ອງທ່ຽວຕ້ອງດໍາເນີນຕາມແຜນການ, ເວລາຢ່າງເຂັ້ມງວດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາຂົນສົ່ງ; ຜູ້ບໍລິການຂົນສົ່ງນັກທ່ອງທ່ຽວ ຕ້ອງມີສຸຂະພາບແຂງແຮງດີ, ມີ

ມະນຸດສຳພັນດີ, ໄດ້ຮັບການຝຶກອົບຮົມຂັ້ນພື້ນຖານ ກ່ຽວກັບວຽກງານທ່ອງທ່ຽວ, ມີຄວາມຮັບຜິດຊອບສູງ ແລະ ມີປະສົບການຢ່າງໜ້ອຍ ສາມ ປີຂຶ້ນໄປ.

## ໝວດທີ 4
## ສະຖານທີ່ພັກແຮມ

### ມາດຕາ 23. ປະເພດສະຖານທີ່ພັກແຮມ

ສະຖານທີ່ພັກແຮມ ປະກອບດ້ວຍປະເພດດັ່ງນີ້: ໂຮງແຮມ, ເຮືອນພັກ, ບ່ອນພັກແຮມຕາມແຫລ່ງທ່ອງທ່ຽວ (ລີສອດ), ບ່ອນພັກແຮມຂອງນັກຂັບຂີ່ (ໂມເຕັນ), ຄ້າຍພັກແຮມ (ແຄັມ), ເຮືອທ່ອງທ່ຽວ, ລົດທ່ອງທ່ຽວ ທີ່ມີຫ້ອງນອນເຄື່ອນທີ່ ແລະ ສະຖານທີ່ພັກແຮມອື່ນໆທີ່ສະໜອງຫ້ອງພັກໃຫ້ແກ່ນັກທ່ອງທ່ຽວ ພ້ອມດ້ວຍການບໍລິການອັນຈຳເປັນ.

### ມາດຕາ 24. ລະດັບຂອງສະຖານທີ່ພັກແຮມ

ສະຖານທີ່ພັກແຮມມີຫຼາຍລະດັບ, ການຈັດລະດັບແມ່ນແນໃສ່ກຳນົດມາດຕະຖານ ແລະ ຄຸນນະພາບຂອງສະຖານທີ່ພັກແຮມ ເພື່ອຕອບສະໜອງໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ.

ການຈັດລະດັບ ແລະ ການປະດັບປະດາສະຖານທີ່ພັກແຮມ ຈະໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 25. ການບໍລິການພັກແຮມ

ການບໍລິການພັກແຮມ ຕ້ອງຮັບປະກັນຄຸນນະພາບ, ຄວາມສະດວກສະບາຍ, ຄວາມປອດໄພ, ຄວາມສະອາດ.

ຜູ້ໃຫ້ການບໍລິການພັກແຮມ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານການບໍລິການພັກແຮມໃນລະດັບອັນແນ່ນອນ, ມີມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ຊື່ສັດ, ຍິ້ມແຍ້ມ ແຈ່ມໃສ ແລະ ອື່ນໆ ເປັນທີ່ພໍໃຈໃຫ້ແກ່ນັກທ່ອງທ່ຽວ.

### ມາດຕາ 26. ການກຳນົດຄ່າພັກແຮມ

ຄ່າພັກແຮມ ຕ້ອງສົມເຫດສົມຜົນ, ແທດເໝາະກັບລະດັບ ຫຼື ມາດຕະຖານ ຂອງສະຖານທີ່ພັກແຮມນັ້ນໆ. ການປ່ຽນແປງຄ່າພັກແຮມ ຕ້ອງແຈ້ງລ່ວງໜ້າໃຫ້ນັກທ່ອງທ່ຽວ ແລະ ພາກສ່ວນກ່ຽວຂ້ອງໃນເວລາອັນເໝາະສົມພ້ອມດ້ວຍເຫດຜົນ.

## ໝວດທີ 5
## ອາຫານ, ເຄື່ອງດື່ມ ແລະ ການບັນເທີງ

**ມາດຕາ 27. ອາຫານ ແລະ ເຄື່ອງດື່ມ**

ອາຫານ ແລະ ເຄື່ອງດື່ມ ທີ່ບໍລິການໃຫ້ນັກທ່ອງທ່ຽວ ຕ້ອງຮັບປະກັນຄຸນນະພາບ, ຄວາມປອດໄພ, ຄວາມສະອາດ ຖືກຕ້ອງຕາມຫລັກອະນາໄມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຫານ.

ເພື່ອຕອບສະໜອງໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ ຕ້ອງມີລາຍການອາຫານ ແລະ ເຄື່ອງດື່ມ ພ້ອມທັງກຳນົດລາຄາ.

ຜູ້ໃຫ້ບໍລິການອາຫານ ແລະ ເຄື່ອງດື່ມ ຕ້ອງປະຕິບັດຕາມຫລັກວິຊາການ, ມີມະນຸດສຳພັນທີ່ດີ.

**ມາດຕາ 28. ການບັນເທີງ**

ການບັນເທີງປະກອບດ້ວຍ: ການສະແດງດົນຕີ, ການສະແດງສິນລະປະວັນນະຄະດີ, ການຟ້ອນ, ການຮ້ອງເພງ, ຂັບລຳພື້ນເມືອງ, ດົນຕີສາກົນ ແລະ ອື່ນໆ ຊຶ່ງສະແດງເຖິງເອກະລັກທາງດ້ານວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດລາວ, ສິ່ງຍອດຍິ່ງ ແລະ ກ້າວໜ້າຂອງໂລກ.

ການບັນເທີງ ອາດຈະຈັດຢູ່ສະຖານທີ່ພັກແຮມ, ຮ້ານອາຫານ ຫລື ຢູ່ສະຖານທີ່ສະເພາະລາຍລະອຽດກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 29. ການສົ່ງເສີມສຸຂະພາບ**

ການສົ່ງເສີມສຸຂະພາບ ປະກອບດ້ວຍ: ກິລາ, ກາຍະບໍລິຫານ, ນວດແຜນບູຮານ, ຮົມຢາພື້ນເມືອງ, ອາບບໍ່ນ້ຳອຸ່ນ, ອາບແດດ, ແລະ ອື່ນໆ ຕາມຄວາມເໝາະສົມ.

ການສົ່ງເສີມສຸຂະພາບ ອາດຈະຈັດຂຶ້ນຢູ່ສະຖານທີ່ພັກແຮມ ຫລື ຢູ່ສະຖານທີ່ອື່ນໆ.

## ໝວດທີ 6
## ເຄື່ອງທີ່ລະນຶກ

**ມາດຕາ 30. ຄວາມສຳຄັນຂອງເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກ ເປັນສິ່ງໜຶ່ງທີ່ສ້າງຄວາມຊົງຈຳອັນດີໃຫ້ແກ່ນັກທ່ອງທ່ຽວ ຕໍ່ສິນລະປະ, ວັດທະນະທຳ, ປະຫວັດສາດ ແລະ ຮີດຄອງປະເພນີຂອງລາວ, ສະແດງໃຫ້ເຫັນເຖິງຄວາມປານີດ, ຄວາມສວຍງາມ ແລະ ສີມືຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 31. ປະເພດເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກມີຫລາຍປະເພດເຊັ່ນ: ເຄື່ອງປະດັບເງິນຄຳ, ເຄື່ອງຈັກສານ, ແຜ່ນແພລາຍຈົກ, ມັດໝີ່, ຖັກແສ່ວ, ເຄື່ອງເອ້, ເຄື່ອງແກະສະລັກ, ຮູບແຕ້ມ, ເຄື່ອງປັ້ນດິນເຜົາ, ເຄື່ອງດິນຕີ ແລະ ອື່ນໆ ທີ່ມີຄວາມປານີດ ຊຶ່ງສ່ອງແສງ ເຖິງຮີດຄອງປະເພນີ, ວັດທະນະທຳອັນດີງາມ ແລະ ວິຖີຊີວິດ ຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 32. ສະຖານທີ່ຈັດວາງເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກໃຫ້ຈັດວາງ ແລະ ຂາຍໃນສະຖານທີ່ພັກແຮມ, ບ່ອນນັກທ່ອງທ່ຽວໄປມາທີ່ມີການຕົບແຕ່ງຢ່າງເໝາະສົມ, ມີຄວາມສະອາດງາມຕາ. ເຄື່ອງທີ່ລະນຶກ ຕ້ອງແມ່ນຜະລິດຕະພັນພາຍໃນເປັນສ່ວນຫຼາຍ.

## ໝວດທີ 7
## ຄວາມປອດໄພ

**ມາດຕາ 33. ການຮັບປະກັນຄວາມປອດໄພ**

ການບໍລິການການທ່ອງທ່ຽວ ຕ້ອງຮັບປະກັນຄວາມປອດໄພທາງດ້ານຊີວິດ, ສຸຂະພາບ ແລະ ຊັບສິນຂອງນັກທ່ອງທ່ຽວ. ຜູ້ບໍລິການການທ່ອງທ່ຽວຕ້ອງມີມາດຕະການ ແລະ ມາດຕະຖານເຕັກນິກກ່ຽວກັບຄວາມປອດໄພ ຊຶ່ງຂະແໜງການທີ່ກ່ຽວຂ້ອງວາງອອກ.

ໃນກໍລະນີທີ່ເກີດເຫດການສຸກເສີນ ຜູ້ບໍລິການທ່ອງທ່ຽວ ຫລື ຜູ້ທີ່ຮູ້ເຫັນເຫດການ ຕ້ອງໃຫ້ຄວາມຊ່ວຍເຫລືອແກ່ນັກທ່ອງທ່ຽວຢ່າງທັນການ.

ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ລັດສ້າງຕັ້ງຕຳຫລວດທ່ອງທ່ຽວຂຶ້ນ.

**ມາດຕາ 34. ການປະກັນໄພ**

ເພື່ອຮັບປະກັນການໃຊ້ແທນຄ່າເສຍຫາຍຂອງນັກທ່ອງທ່ຽວທີ່ອາດຈະເກີດຂຶ້ນນັ້ນ ຜູ້ບໍລິການທ່ອງທ່ຽວຕ້ອງມີປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນໄພ ແຫ່ງ ສປປ ລາວ.

## ໝວດທີ 8
## ການບໍລິການນຳທ່ຽວ

**ມາດຕາ 35. ປະເພດການບໍລິການນຳທ່ຽວ**

ການບໍລິການນຳທ່ຽວແບ່ງອອກເປັນ ສາມ ປະເພດດັ່ງນີ້:

- ການນຳທ່ຽວລະຫວ່າງປະເທດ;
- ການນຳທ່ຽວພາຍໃນປະເທດ;

- ການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ.

**ມາດຕາ 36. ການບໍລິການນຳທ່ຽວລະຫວ່າງປະເທດ**

ການບໍລິການນຳທ່ຽວລະຫວ່າງປະເທດ ແມ່ນການບໍລິການນຳນັກທ່ອງທ່ຽວເຂົ້າມາພາຍໃນປະເທດ ຫຼື ນຳນັກທ່ອງທ່ຽວອອກຕ່າງປະເທດ ເພື່ອຈຸດປະສົງທ່ອງທ່ຽວ.

**ມາດຕາ 37. ການບໍລິການນຳທ່ຽວພາຍໃນປະເທດ**

ການບໍລິການນຳທ່ຽວພາຍໃນປະເທດ ແມ່ນການບໍລິການນຳນັກທ່ອງທ່ຽວຢູ່ ສປປ ລາວ ທ່ຽວຊົມພາຍໃນປະເທດ.

**ມາດຕາ 38. ການບໍລິການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ**

ການບໍລິການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ ແມ່ນການບໍລິການນຳພານັກທ່ອງທ່ຽວທ່ຽວຊົມໃນສະຖານທີ່ທ່ອງທ່ຽວໃດໜຶ່ງ ຂອງ ສປປ ລາວ.

**ມາດຕາ 39. ການຈັດການບໍລິການນຳທ່ຽວ**

ການຈັດການບໍລິການນຳທ່ຽວ ຕ້ອງດຳເນີນໄປຕາມແຜນການ, ລາຍການ, ຕາຕະລາງເວລາ, ມາດຕະຖານ ແລະ ຄຸນນະພາບການນຳທ່ຽວ ທີ່ໄດ້ກຳນົດໄວ້.

**ມາດຕາ 40. ຄ່າບໍລິການນຳທ່ຽວ**

ຄ່າບໍລິການນຳທ່ຽວຕ້ອງສົມເຫດສົມຜົນກັບລາຍການ, ຕາຕະລາງເວລາ, ມາດຕະຖານ ແລະ ຄຸນນະພາບການນຳທ່ຽວ. ການປ່ຽນແປງລາຄາ ຫລື ລາຍການນຳທ່ຽວ ທີ່ໄດ້ຕົກລົງກັນແລ້ວດ້ວຍເຫດຜົນໃດໜຶ່ງຕ້ອງໄດ້ຮັບການເຫັນດີຈາກນັກທ່ອງທ່ຽວ.

## ໝວດທີ 9
## ພະນັກງານນຳທ່ຽວ

**ມາດຕາ 41. ປະເພດ ແລະ ລະດັບພະນັກງານນຳທ່ຽວ**

ພະນັກງານນຳທ່ຽວປະກອບດ້ວຍ ສອງ ປະເພດຄື: ພະນັກງານນຳທ່ຽວ ທີ່ສັງກັດບໍລິສັດທ່ອງທ່ຽວ ແລະ ພະນັກງານນຳທ່ຽວທີ່ບໍ່ສັງກັດບໍລິສັດທ່ອງທ່ຽວ.

ພະນັກງານນຳທ່ຽວທັງສອງປະເພດຂ້າງເທິງນີ້ ປະກອບດ້ວຍສາມລະດັບຄື: ພະນັກງານນຳທ່ຽວລະດັບຊາດ, ພະນັກງານນຳທ່ຽວລະດັບແຂວງ ແລະ ພະນັກງານນຳທ່ຽວລະດັບພື້ນທີ່ສະເພາະໃດໜຶ່ງ.

**ມາດຕາ 42. ມາດຕະຖານພະນັກງານນຳທ່ຽວ**

ພະນັກງານນຳທ່ຽວຕ້ອງມີມາດຕະຖານຕົ້ນຕໍ ດັ່ງຕໍ່ໄປນີ້:

- ເປັນພົນລະເມືອງລາວ, ມີພູມລຳເນົາຢູ່ ສປປ ລາວ;
- ມີອາຍຸແຕ່ 18 ປີ ຂຶ້ນໄປ;
- ໄດ້ຮັບການຝຶກອົບຮົມດ້ານການນຳທ່ຽວ ທີ່ທາງການຮັບຮູ້ຢ່າງຖືກຕ້ອງ ແລະ ມີບັດພະນັກງານນຳທ່ຽວ;
- ມີຄວາມຮູ້, ຄວາມສາມາດ, ປະສົບການໃນການນຳທ່ຽວເປັນຕົ້ນ ພູມສາດ, ປະຫວັດສາດ, ພາສາຕ່າງປະເທດ ແລະ ມີຄວາມຮູ້ທາງດ້ານການປະຖົມພະຍາບານຂັ້ນພື້ນຖານ;
- ມີຄຸນສົມບັດດີ, ມະນຸດສຳພັນດີ, ມີມາລະຍາດດີ, ສຸພາບຮຽບຮ້ອຍ;
- ມີສຸຂະພາບແຂງແຮງດີ, ບໍ່ມີພະຍາດຕິດແປດ.

**ມາດຕາ 43. ສິດ ແລະ ໜ້າທີ່ ຂອງພະນັກງານນຳທ່ຽວ**

ພະນັກງານນຳທ່ຽວມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

- ນຳພານັກທ່ອງທ່ຽວທ່ຽວຊົມຕາມສະຖານທີ່ທ່ອງທ່ຽວວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ທີ່ເປີດໃຫ້ການບໍລິການ;
- ຮັບປະກັນຄວາມປອດໄພ ໃຫ້ແກ່ນັກທ່ອງທ່ຽວ, ໃຫ້ການຊ່ວຍເຫລືອແກ່ເຂົາເຈົ້າໃນກໍລະນີຈຳເປັນ;
- ເຄົາລົບນັບຖືຜູ້ໃຊ້ບໍລິການ, ລະບຽບກົດໝາຍ ແລະ ຮີດຄອງປະເພນີຂອງທ້ອງຖິ່ນບ່ອນທ່ຽວຊົມ;
- ຊີ້ແຈງ, ອະທິບາຍປະຫວັດຄວາມເປັນມາ ຂອງສະຖານທີ່ທ່ອງທ່ຽວ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ IV
# ນັກທ່ອງທ່ຽວ ແລະ ການເຂົ້າ-ອອກເມືອງ

## ໝວດທີ 1
## ນັກທ່ອງທ່ຽວ

**ມາດຕາ 44. ປະເພດນັກທ່ອງທ່ຽວ**

ນັກທ່ອງທ່ຽວແບ່ງອອກເປັນ ສອງ ປະເພດຄື:

- ນັກທ່ອງທ່ຽວພາຍໃນ;
- ນັກທ່ອງທ່ຽວສາກົນ.

**ມາດຕາ 45. ນັກທ່ອງທ່ຽວພາຍໃນ**

ນັກທ່ອງທ່ຽວພາຍໃນ ແມ່ນນັກທ່ອງທ່ຽວທີ່ເປັນພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ຫຼື ຊາວຕ່າງປະເທດ ທີ່ຢູ່ ສປປ ລາວ ຊຶ່ງເດີນທາງໄປທ່ອງທ່ຽວພາຍໃນປະເທດ.

**ມາດຕາ 46. ນັກທ່ອງທ່ຽວສາກົນ**

ນັກທ່ອງທ່ຽວສາກົນ ແມ່ນນັກທ່ອງທ່ຽວທີ່ເປັນຊາວຕ່າງປະເທດ, ພົນລະເມືອງລາວຢູ່ຕ່າງປະເທດເດີນທາງເຂົ້າມາທ່ຽວຢູ່ ສປປລາວ ຫຼື ພົນລະເມືອງລາວ, ຊາວຕ່າງປະເທດ, ຊາວຕ່າງດ້າວ ແລະ ຄົນບໍ່ມີສັນຊາດທີ່ອາໄສຢູ່ ສປປ ລາວ ຊຶ່ງເດີນທາງໄປທ່ອງທ່ຽວຢູ່ຕ່າງປະເທດ.

**ມາດຕາ 47. ສິດ ແລະ ພັນທະຂອງນັກທ່ອງທ່ຽວ**

ນັກທ່ອງທ່ຽວມີສິດຕົ້ນຕໍ ດັ່ງນີ້:

- ໄປທ່ອງທ່ຽວ ໂດຍຜ່ານການບໍລິການ ຂອງບໍລິສັດທ່ອງທ່ຽວໃດໜຶ່ງ ຫລື ໄປທ່ອງທ່ຽວດ້ວຍຕົນເອງ;
- ເລືອກການບໍລິການຄົບວົງຈອນ ຫລື ສ່ວນໃດສ່ວນໜຶ່ງ ຈາກບໍລິສັດທ່ອງທ່ຽວ;
- ໄດ້ຮັບຄວາມສະດວກໃນການເຂົ້າ-ອອກປະເທດ, ການເດີນທາງທ່ອງທ່ຽວ;
- ໄດ້ຮັບອະນຸຍາດ ແລະ ຍົກເວັ້ນພາສີຕໍ່ສິ່ງຂອງຕິດຕົວທີ່ນໍາເຂົ້າ ແລະ ນໍາອອກ ສປປ ລາວ ຕາມລະບຽບກົດໝາຍ;
- ຮ້ອງທຸກຕໍ່ການກະທໍາບໍ່ຖືກຕ້ອງ ທີ່ກໍ່ຄວາມເສຍຫາຍແກ່ຕົນ.

ນັກທ່ອງທ່ຽວມີພັນທະຕົ້ນຕໍ ດັ່ງນີ້:

- ເຄົາລົບລະບຽບກົດໝາຍ ແລະ ຮີດຄອງປະເພນີ ຂອງລາວ;
- ປະຕິບັດຕາມແຜນການ, ຕາຕະລາງເວລາ ກ່ຽວກັບການທ່ອງທ່ຽວຢ່າງເຂັ້ມງວດ;
- ບໍ່ກໍ່ຄວາມເສຍຫາຍໃຫ້ແກ່ຊັບພະຍາກອນທ່ອງທ່ຽວ ແລະ ສິ່ງແວດລ້ອມທໍາມະຊາດ ຫລື ສັງຄົມ.

## ໝວດທີ 2
## ການເຂົ້າ-ອອກປະເທດຂອງນັກທ່ອງທ່ຽວ

**ມາດຕາ 48. ການອະນຸຍາດເຂົ້າ-ອອກປະເທດ**

ນັກທ່ອງທ່ຽວທີ່ຈະເດີນທາງເຂົ້າມາທ່ຽວໃນ ສປປ ລາວ ຕ້ອງນໍາໃຊ້ໜັງສືຜ່ານແດນ (ປາສປໍ), ບັດຜ່ານແດນ (ບໍເດີພາສ) ຫລື ໜັງສືອະນຸຍາດເດີນທາງ (ທຣາເວລເພີມິດ) ຕາມລະບຽບການ ຂອງ ສປປ ລາວ;

ເຈົ້າໜ້າທີ່ຮັບຜິດຊອບທີ່ກ່ຽວຂ້ອງຕ້ອງອໍານວຍຄວາມສະດວກ, ການບໍລິການຕ້ອງກະທັດຮັດ ແລະ ມີຄວາມວ່ອງໄວ ໃນການອະນຸຍາດເຂົ້າ-ອອກປະເທດ ໃຫ້ແກ່ນັກທ່ອງທ່ຽວ.

**ມາດຕາ 49. ດ່ານເຂົ້າ-ອອກ ປະເທດ**

ນັກທ່ອງທ່ຽວທີ່ເຂົ້າມາທ່ຽວ ສປປ ລາວ ຕ້ອງເຂົ້າ ແລະ ອອກຕາມດ່ານຕ່າງໆ ທີ່ໄດ້ກໍານົດໄວ້ ແລະ ປະຕິບັດຕາມລະບຽບການເຂົ້າ-ອອກໃຫ້ຖືກຕ້ອງ.

ເຈົ້າໜ້າທີ່ຮັບຜິດຊອບຢູ່ຕາມດ່ານຕ່າງໆ ຕ້ອງຈັດສັນສະຖານທີ່, ຄຸ້ມຄອງ, ກວດກາ, ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃຫ້ເໝາະສົມ ເພື່ອອໍານວຍຄວາມສະດວກ, ບໍລິການວ່ອງໄວ, ຮັບໃຊ້ດ້ວຍອັດທະຍາໄສໄມຕີອັນດີໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າ ແລະ ອອກປະເທດ.

**ມາດຕາ 50. ການເດີນທາງພາຍໃນປະເທດ**

ນັກທ່ອງທ່ຽວ ທີ່ຖືໜັງສືຜ່ານແດນ, ບັດຜ່ານແດນ ຫຼື ໜັງສືອະນຸຍາດເດີນທາງສາມາດເດີນທາງໄປແຫ່ງຕ່າງໆພາຍໃນປະເທດໄດ້ຕາມລະບຽບການ.

ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງອໍານວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວທີ່ເດີນທາງທ່ອງທ່ຽວຢູ່ພາຍໃນປະເທດ, ປັບປຸງແກ້ໄຂລະບຽບການທີ່ບໍ່ສອດຄ່ອງ ຊຶ່ງສ້າງຄວາມຫຍຸ້ງຍາກໃຫ້ແກ່ນັກທ່ອງທ່ຽວໃນການເດີນທາງ ແລະ ທ່ຽວຊົມສະຖານທີ່ທ່ອງທ່ຽວຕ່າງໆ.

## ພາກທີ V
## ການພັດທະນາການທ່ອງທ່ຽວ

### ໝວດທີ 1
### ການວາງແຜນພັດທະນາການທ່ອງທ່ຽວ

**ມາດຕາ 51. ລະດັບແຜນພັດທະນາການທ່ອງທ່ຽວ**

ແຜນພັດທະນາການທ່ອງທ່ຽວມີແຜນໄລຍະຍາວ, ກາງ ແລະ ສັ້ນ ຊຶ່ງຈັດລະດັບດັ່ງນີ້:

- ແຜນຍຸດທະສາດພັດທະນາການທ່ອງທ່ຽວແຫ່ງຊາດ;
- ແຜນພັດທະນາການທ່ອງທ່ຽວລະດັບພາກ;
- ແຜນພັດທະນາການທ່ອງທ່ຽວລະດັບແຂວງ;
- ແຜນພັດທະການທ່ອງທ່ຽວລະດັບເມືອງ;
- ແຜນພັດທະນາແຫລ່ງທ່ອງທ່ຽວ;

**ມາດຕາ 52. ຫລັກການໃນການວາງແຜນ**

ການວາງແຜນພັດທະນາການທ່ອງທ່ຽວ ຕ້ອງປະຕິບັດຕາມຫລັກການພື້ນຖານດັ່ງນີ້:

- ອີງໃສ່ທ່າແຮງບົ່ມຊ້ອນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ;
- ດໍາເນີນຕາມທິດການທ່ອງທ່ຽວວັດທະນະທໍາ, ປະຫັວດສາດ ແລະ ທໍາມະຊາດໂດຍມີສ່ວນຮ່ວມຂອງຊຸມຊົນ;

- ຮັບປະກັນລັກສະນະຍືນຍົງຕິດພັນກັບການປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງລາວ;
- ຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນ ເພື່ອຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ;
- ແນໃສ່ສົ່ງເສີມການທ່ອງທ່ຽວພາຍໃນ ແລະ ການທ່ອງທ່ຽວສາກົນ;
- ເລັ່ງໃສ່ເຂດເປົ້າໝາຍທີ່ໂດດເດັ່ນ ລວມທັງການສ້າງຜະລິດຕະພັນທ່ອງທ່ຽວໃໝ່ ທີ່ມີຄວາມສາມາດແຂ່ງຂັນໃນຂົງເຂດ ແລະ ໃນໂລກ.

**ມາດຕາ 53. ເນື້ອໃນການວາງແຜນພັດທະນາການທ່ອງທ່ຽວ**

ແຜນພັດທະນາການທ່ອງທ່ຽວ ຕ້ອງກຳນົດເນື້ອໃນຕົ້ນຕໍ, ຈຸດປະສົງ, ຄາດໝາຍ, ເປົ້າໝາຍພັດທະນາ, ປະເມີນ ແລະ ວິເຄາະທ່າແຮງບົ່ມຊ້ອນ, ສະພາບການຕະຫລາດທ່ອງທ່ຽວ, ຜົນໄດ້ຮັບ, ຜົນກະທົບຕໍ່ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມ ພ້ອມທັງກຳນົດວິທີການ, ລະບຽບການ ແລະ ມາດຕະການໃນການຈັດຕັ້ງປະຕິບັດ.

## ໝວດທີ 2
## ການພັດທະນາແຫລ່ງທ່ອງທ່ຽວ

**ມາດຕາ 54. ຂັ້ນຕອນການພັດທະນາແຫລ່ງທ່ອງທ່ຽວ**

ຂັ້ນຕອນການພັດທະນາແຫລ່ງທ່ອງທ່ຽວປະກອບດ້ວຍ: ການສຳຫລວດ, ວາງແຜນ, ແບ່ງເຂດ, ຈັດສັນ, ອອກແບບ, ລົງທຶນສ້າງ ແລະ ຮຽບຮຽງປະຫວັດແຫລ່ງທ່ອງທ່ຽວ.

**ມາດຕາ 55. ການແບ່ງເຂດພັດທະນາແຫລ່ງທ່ອງທ່ຽວ**

ການແບ່ງເຂດພັດທະນາແຫລ່ງທ່ອງທ່ຽວ ຕ້ອງອີງໃສ່ທ່າແຮງຂອງຊັບພະຍາກອນການທ່ອງທ່ຽວ ແລະ ເງື່ອນໄຂເອື້ອອຳນວຍໃຫ້ແກ່ການທ່ອງທ່ຽວ.

ການພັດທະນາແຫລ່ງທ່ອງທ່ຽວແບ່ງເປັນສາມເຂດຄື: ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການຮັບໃຊ້ນັກທ່ອງທ່ຽວ.

**ມາດຕາ 56. ລະບຽບການຄຸ້ມຄອງແຫລ່ງທ່ອງທ່ຽວ**

ລະບຽບການຄຸ້ມຄອງແຫ່ລງທ່ອງທ່ຽວ ປະກອບດ້ວຍສອງປະເພດຄື: ລະບຽບການຄຸ້ມຄອງລວມ ແລະ ລະບຽບການຄຸ້ມຄອງສະເພາະ.

ລະບຽບການຄຸ້ມຄອງລວມມີເນື້ອໃນຕົ້ນຕໍກ່ຽວກັບການອະນຸລັກ, ການປົກປັກຮັກສາແຫລ່ງທ່ອງທ່ຽວ, ສິ່ງແວດລ້ອມ, ການປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ການນຳໃຊ້ທີ່ດິນ ແລະ ການປຸກສ້າງ.

ລະບຽບການຄຸ້ມຄອງສະເພາະມີເນື້ອໃນກ່ຽວກັບແຕ່ລະແຫລ່ງທ່ອງທ່ຽວ ແລະ ຕອ້ງໃຫ້ສອດຄ່ອງກັບ ລະບຽບການຄຸ້ມຄອງລວມ.

## ໝວດທີ 3
## ເມືອງທ່ອງທ່ຽວ

**ມາດຕາ 57. ເງື່ອນໄຂເປັນເມືອງທ່ອງທ່ຽວ**

ເມືອງທ່ອງທ່ຽວ ເປັນເມືອງທີ່ຄົນນິຍົມໄປທ່ຽວຊົມ ເປັນຈຳນວນຫລວງຫລາຍ ຊຶ່ງປະກອບດ້ວຍເງື່ອນໄຂຕົ້ນຕໍດັ່ງນີ້:

- ມີຊັບພະຍາກອນທ່ອງທ່ຽວທາງດ້ານວັດທະນະທຳ, ປະຫວັດສາດ ຫລື ທຳມະຊາດ ຢູ່ພາຍໃນ ຫລື ບໍລິເວນນອກຕົວເມືອງ ທີ່ດຶງດູດໃຈນັກທ່ອງທ່ຽວ;
- ມີຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບ ແລະ ຄວາມປອດໄພ;
- ມີພື້ນຖານໂຄງລ່າງສະດວກໂດຍພື້ນຖານ ແລະ ສາມາດພັດທະນາໃນຂັ້ນຕໍ່ໄປ;
- ທຸລະກິດການທ່ອງທ່ຽວເປັນພາກສ່ວນສຳຄັນໃນໂຄງປະກອບເສດຖະກິດຂອງເມືອງ ຊຶ່ງລາຍຮັບສ່ວນຫຼາຍໄດ້ມາຈາກການທ່ອງທ່ຽວ.

**ມາດຕາ 58. ການພັດທະນາເມືອງທ່ອງທ່ຽວ**

ໃນເມືອງທ່ອງທ່ຽວ ການພັດທະນາເສດຖະກິດ-ສັງຄົມ ຕ້ອງຖືເອົາການທ່ອງທ່ຽວເປັນບູລິມະສິດ.

ການພັດທະນາເມືອງທ່ອງທ່ຽວ ຕ້ອງເລັ່ງໃສ່ການສົ່ງເສີມການລົງທຶນ, ສ້າງພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ, ພັດທະນາຊັບພະຍາກອນມະນຸດ, ສ້າງຈິດສຳນຶກກ່ຽວກັບການທ່ອງທ່ຽວໃຫ້ພົນລະເມືອງ ແລະ ການນຳໃຊ້ທີ່ດິນ, ພັດທະນາຕົວເມືອງໃຫ້ມີຄວາມສະອາດ, ສວຍງາມ, ເປັນລະບຽບຮຽບຮ້ອຍ ເພື່ອດຶງດູດນັກທ່ອງທ່ຽວ.

**ມາດຕາ 59. ການຄຸ້ມຄອງເມືອງທ່ອງທ່ຽວ**

ເມືອງທ່ອງທ່ຽວ ຕ້ອງມີລະບຽບການຄຸ້ມຄອງສະເພາະ ແນໃສ່ປົກປັກຮັກສາ, ອະນຸລັກ ແລະ ພັດທະນາຊັບພະຍາກອນທ່ອງທ່ຽວ, ສິ່ງແວດລ້ອມທາງດ້ານວັດທະນະທຳ-ສັງຄົມ ແລະ ທຳມະຊາດ.

ສຳລັບລະບຽບການຄຸ້ມຄອງເມືອງທ່ອງທ່ຽວໄດ້ກຳນົດໄວ້ຕ່າງຫາກ.

## ໝວດທີ 4
## ກອງທຶນການທ່ອງທ່ຽວແຫ່ງຊາດ

**ມາດຕາ 60. ຈຸດປະສົງຂອງກອງທຶນ**

ກອງທຶນການທ່ອງທ່ຽວແຫ່ງຊາດ ສ້າງຂຶ້ນເພື່ອພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ເຊັ່ນ: ພັດທະນາຊັບພະຍາກອນມະນຸດ, ພັດທະນາສິ່ງອຳນວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ, ໂຄສະນາສົ່ງເສີມການຕະຫລາດ ແລະ ຄຸ້ມຄອງການທ່ອງທ່ຽວ, ປະຕິບັດພັນທະຕໍ່ອົງການຈັດຕັ້ງສາກົນທີ່ ສປປ ລາວ ເປັນສະມາຊິກໃນວຽກງານທ່ອງທ່ຽວ.

**ມາດຕາ 61. ແຫລ່ງກອງທຶນ**

ກອງທຶນການທ່ອງທ່ຽວແຫ່ງຊາດໄດ້ມາຈາກ: ງົບປະມານຂອງລັດ, ການປະກອບສ່ວນຈາກບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ, ລາຍໄດ້ຈາກການເຄື່ອນໄຫວກິດຈະກຳກ່ຽວກັບການທ່ອງທ່ຽວເຊັ່ນ: ເທດສະການອາຫານ, ຕະຫລາດນັດການທ່ອງທ່ຽວ,ການວາງສະແດງ ແລະ ລາຍໄດ້ອື່ນໆ.

**ມາດຕາ 62. ການຄຸ້ມຄອງ ແລະ ນຳໃຊ້ກອງທຶນການທ່ອງທ່ຽວແຫ່ງຊາດ**

ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນການທ່ອງທ່ຽວແຫ່ງຊາດຕ້ອງປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້.

ລັດຖະບານ ເປັນຜູ້ອອກລະບຽບການຄຸ້ມຄອງ ແລະ ນຳໃຊ້ເງິນກອງທຶນດັ່ງກ່າວ.

## ພາກທີ VI
## ທຸລະກິດການທ່ອງທ່ຽວ

**ມາດຕາ 63. ກິດຈະການທຸລະກິດການທ່ອງທ່ຽວ**

ກິດຈະການທຸລະກິດການທ່ອງທ່ຽວ ປະກອບດ້ວຍ:

- ທຸລະກິດແຫລ່ງທ່ອງທ່ຽວ;
- ທຸລະກິດນຳທ່ຽວ;
- ທຸລະກິດຂົນສົ່ງນັກທ່ອງທ່ຽວ;
- ທຸລະກິດພັກແຮມ;
- ທຸລະກິດພັດຕະຄານ, ຮ້ານອາຫານ;
- ທຸລະກິດຝຶກອົບຮົມການທ່ອງທ່ຽວ;
- ທຸລະກິດທີ່ປຶກສາການທ່ອງທ່ຽວ;
- ທຸລະກິດສະຖານບັນເທີງ;
- ທຸລະກິດເຄື່ອງທີ່ລະນຶກ ແລະ ອື່ນໆ.

**ມາດຕາ 64. ການສ້າງຕັ້ງ ແລະ ດຳເນີນທຸລະກິດການທ່ອງທ່ຽວ**

ບຸກຄົນ ຫລື ນິຕິບຸກຄົນພາຍໃນປະເທດ ທີ່ຈະສ້າງຕັ້ງວິສາຫະກິດ ເພື່ອດຳເນີນທຸລະກິດການທ່ອງທ່ຽວຕ້ອງປະຕິບັດຕາມເງື່ອນໄຂຕົ້ນຕໍດັ່ງລຸ່ມນີ້:

**ກ. ບຸກຄົນ:**

- ເປັນພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ມີພູມລຳເນົາ ຢູ່ ສປປ ລາວ;
- ມີຄວາມສາມາດດ້ານການປະພຶດ;

- ບໍ່ເຄີຍຖືກໂທດທາງອາຍາ;
- ບໍ່ແມ່ນບຸກຄົນ ທີ່ລົ້ມລະລາຍ ຊຶ່ງຍັງບໍ່ທັນພົ້ນໄລຍະຫ້າມດຳເນີນທຸລະກິດ.

**ຂ. ນິຕິບຸກຄົນ :**

ນິຕິບຸກຄົນພາຍໃນທີ່ເປັນຫົວໜ່ວຍທຸລະກິດ:
- ມີທະບຽນທຸລະກິດຖືກຕ້ອງຕາມກົດໝາຍ;
- ມີສຳນັກງານຕັ້ງຢູ່ ສປປ ລາວ;
- ປະຕິບັດພັນທະຕໍ່ລັດຕາມລະບຽບກົດໝາຍຢ່າງຖືກຕ້ອງ;

ສຳລັບນິຕິບຸກຄົນອື່ນຕ້ອງໄດ້ຮັບອະນຸຍາດສະເພາະ ຈາກອົງການທີ່ກ່ຽວຂ້ອງ.

ບຸກຄົນ ຫລື ນິຕິບຸກຄົນຕ່າງປະເທດ ມີສິດສ້າງຕັ້ງວິສາຫະກິດ ເພື່ອດຳເນີນທຸລະກິດການທ່ອງທ່ຽວຢູ່ ສປປ ລາວ ໃນກິດຈະການຕ່າງໆເປັນຕົ້ນ: ໂຮງແຮມ, ລີສອດ, ຮ້ານອາຫານ, ແຫລ່ງທ່ອງທ່ຽວ. ສຳລັບທຸລະກິດນຳທ່ຽວລະຫວ່າງປະເທດ ລັດອະນຸຍາດໃຫ້ນິຕິບຸກຄົນຕ່າງປະເທດລົງທຶນຮ່ວມກັບ ຜູ້ລົງທຶນພາຍໃນປະເທດໄດ້.

ບຸກຄົນ ຫລື ນິຕິບຸກຄົນຕ່າງປະເທດ ຈະບໍ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດການທ່ອງທ່ຽວ ໃນບາງກິດຈະການທີ່ສະຫງວນໄວ້ໃຫ້ແກ່ຄົນລາວ ເປັນຕົ້ນ: ອາຊີບພະນັກງານນຳທ່ຽວ, ທຸລະກິດນຳທ່ຽວພາຍໃນປະເທດ, ທຸລະກິດນຳທ່ຽວພື້ນທີ່ສະເພາະໃດໜຶ່ງ, ເຮືອນພັກ, ຫ້ອງພັກ.

ລະບຽບການລະອຽດກ່ຽວກັບການອະນຸຍາດລົງທຶນສ້າງຕັ້ງວິສາຫະກິດທ່ອງທ່ຽວຢູ່ ສປປ ລາວ ສຳລັບບຸກຄົນ ຫລື ນິຕິບຸກຄົນຕ່າງປະເທດໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 65. ສິດ ແລະ ພັນທະ ຂອງວິສາຫະກິດການທ່ອງທ່ຽວ**

ວິສາຫະກິດການທ່ອງທ່ຽວມີສິດຕົ້ນຕໍ ດັ່ງນີ້:
- ເຄື່ອນໄຫວດຳເນີນທຸລະກິດຂອງຕົນຢ່າງເສລີ ຖືກຕ້ອງຕາມກົດໝາຍ;
- ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມລະບຽບກົດໝາຍ;
- ເຂົ້າຮ່ວມການເຄື່ອນໄຫວຂອງສະມາຄົມທຸລະກິດການທ່ອງທ່ຽວ;
- ກຳນົດຄ່າບໍລິການທ່ອງທ່ຽວໂດຍສອດຄ່ອງກັບເງື່ອນໄຂ ແລະ ມາດຕະຖານຂອງທຸລະກິດຂອງຕົນ;

ວິສາຫະກິດການທ່ອງທ່ຽວມີພັນທະຕົ້ນຕໍດັ່ງນີ້:
- ເຄົາລົບ ແລະ ປະຕິບັດລະບຽບກົດໝາຍເປັນຕົ້ນ ລະບຽບກົດໝາຍກ່ຽວກັບການທ່ອງທ່ຽວຢ່າງເຂັ້ມງວດ;
- ປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ, ຄວາມສະອາດ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
- ຖືບັນຊີວິສາຫະກິດ ແລະ ປະຕິບັດພັນທະຕໍ່ລັດຢ່າງເຂັ້ມງວດ ລວມທັງເກັບຄ່າທຳນຽມຈາກນັກທ່ອງທ່ຽວ ເຂົ້າກອງທຶນການທ່ອງທ່ຽວແຫ່ງຊາດ.

## ພາກທີ VII
## ຂໍ້ຫ້າມກ່ຽວກັບການທ່ອງທ່ຽວ

**ມາດຕາ 66. ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດທ່ອງທ່ຽວ**

ຂໍ້ຫ້າມຕົ້ນຕໍ ສຳລັບຜູ້ດຳເນີນທຸລະກິດທ່ອງທ່ຽວ ມີດັ່ງນີ້:

- ດຳເນີນທຸລະກິດທ່ອງທ່ຽວ ທີ່ແຕະຕ້ອງເຖິງອຳນາດອະທິປະໄຕ, ຄວາມໝັ້ນຄົງ, ຄວາມສະຫງົບຂອງຊາດ ຫລື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
- ສ້າງ ແລະ ປະຕິບັດໂຄງການທ່ອງທ່ຽວ ທີ່ບໍ່ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ ຫລື ກໍ່ຄວາມເສຍຫາຍ ແກ່ຊັບພະຍາກອນການທ່ອງທ່ຽວ, ສິ່ງແວດລ້ອມ ຫລື ທັດສະນີຍະພາບ;
- ຊອກຫາຜົນປະໂຫຍດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຈາກນັກທ່ອງທ່ຽວ;
- ດຳເນີນທຸລະກິດທ່ອງທ່ຽວໂດຍບໍ່ໄດ້ຮັບອະນຸຍາດ;
- ດຳເນີນທຸລະກິດທ່ອງທ່ຽວຜິດຕໍ່ລະບຽບກົດໝາຍ ຫລື ຮີດຄອງປະເພນີອັນດີງາມຂອງຊາດ;
- ໂອນ ຫລື ໃຫ້ເຊົ່າ ໃບທະບຽນທຸລະກິດທ່ອງທ່ຽວ ໃຫ້ແກ່ຜູ້ທີ່ບໍ່ມີເງື່ອນໄຂຄົບຖ້ວນ.

**ມາດຕາ 67. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງ**

ຫ້າມບຸກຄົນ ແລະ ການຈັດຕັ້ງມີການກະທຳດັ່ງນີ້:

- ທຳລາຍຊັບພະຍາກອນທ່ອງທ່ຽວ, ຄວາມສວຍງາມຂອງສິ່ງແວດລ້ອມທີ່ພົວພັນເຖິງການທ່ອງທ່ຽວ;
- ສ້າງສິ່ງກີດຂວາງ, ຄວາມເປິເປື້ອນໃນສະຖານທີ່ທ່ອງທ່ຽວ;
- ບຸກລຸກ, ຈັບຈອງ ຫລື ປຸກສ້າງຢູ່ໃນເຂດຊັບພະຍາກອນທ່ອງທ່ຽວ ໂດຍບໍ່ໄດ້ຮັບອະນຸຍາດ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ ກ່ຽວກັບການທ່ອງທ່ຽວ

### ໝວດທີ 1
### ການຄຸ້ມຄອງ

**ມາດຕາ 68. ອົງການຄຸ້ມຄອງການທ່ອງທ່ຽວ**

ລັດຖະບານຄຸ້ມຄອງການທ່ອງທ່ຽວຢ່າງລວມສູນ ແລະ ເປັນເອກະພາບ ໃນທົ່ວປະເທດ ໂດຍມອບໃຫ້ອົງການທ່ອງທ່ຽວແຫ່ງຊາດເປັນໃຈກາງ ໃນການຄຸ້ມຄອງບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງການທ່ອງທ່ຽວປະກອບດ້ວຍ:

- ອົງການທ່ອງທ່ຽວແຫ່ງຊາດ;
- ພະແນກ ຫລື ຫ້ອງການທ່ອງທ່ຽວປະຈຳແຂວງ, ນະຄອນ;
- ຫ້ອງການ ຫລື ໜ່ວຍງານທ່ອງທ່ຽວປະຈຳເມືອງ, ເທດສະບານ;

**ມາດຕາ 69. ສິດ ແລະ ໜ້າທີ່ ຂອງອົງການທ່ອງທ່ຽວແຫ່ງຊາດ**

ອົງການທ່ອງທ່ຽວແຫ່ງຊາດ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

- ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ, ແຜນການ ແລະ ໂຄງການກ່ຽວກັບການພັດທະນາການທ່ອງທ່ຽວໃນຂອບເຂດທົ່ວປະເທດ ເພື່ອສະເໜີລັດຖະບານພິຈາລະນາ;
- ສົມທົບກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອກຳນົດແຜນປົກປັກຮັກສາ, ອະນຸລັກ, ບູລະນະ, ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃນຂອບເຂດທົ່ວປະເທດ;
- ຄົ້ນຄວ້ານະໂຍບາຍ, ລະບຽບການກ່ຽວກັບການຄຸ້ມຄອງ, ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ນຳສະເໜີລັດຖະບານເພື່ອພິຈາລະນາ;
- ຊີ້ນຳ, ຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ, ແຜນການ, ໂຄງການ, ລະບຽບກົດໝາຍກ່ຽວກັບການທ່ອງທ່ຽວ;
- ກຳນົດເງື່ອນໄຂ, ມາດຕະຖານ ຂອງແຕ່ລະປະເພດທຸລະກິດທ່ອງທ່ຽວ ເພື່ອໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນ;
- ກຳນົດມາດຕະຖານກ່ຽວກັບການຈັດລະດັບ ຂອງທຸລະກິດພັກແຮມ, ຮ້ານອາຫານໃຫ້ຖືກຕ້ອງຕາມຫລັກວິຊາການ ແລະ ມາດຕະຖານສາກົນ;
- ຈັດຕັ້ງ ແລະ ສົ່ງເສີມການກໍ່ສ້າງ, ບຳລຸງ, ຍົກລະດັບ, ຝຶກອົບຮົມບຸກຄະລາກອນຂອງພາກລັດ ແລະ ເອກະຊົນ ທີ່ເຄື່ອນໄຫວໃນວຽກງານທ່ອງທ່ຽວ ໃຫ້ມີຄວາມສາມາດບໍລິການນັກທ່ອງທ່ຽວໃນລະດັບທີ່ແນ່ນອນ;
- ປັບປຸງລະບົບການຈັດຕັ້ງຂອງຂະແໜງທ່ອງທ່ຽວໃຫ້ມີຄວາມໜັກແໜ້ນ, ຄຸ້ມຄອງ ແລະ ນຳໃຊ້ພະນັກງານ, ລັດຖະກອນ ໂດຍຮັບປະກັນດ້ານປະລິມານ, ຄຸນນະພາບ ແລະ ປະສິດທິຜົນ ແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ;
- ຄຸ້ມຄອງ ແລະ ນຳໃຊ້ກອງທຶນການທ່ອງທ່ຽວແຫ່ງຊາດ ຢ່າງມີແຜນການ ແລະ ມີປະສິດທິຜົນ;
- ປະສານສົມທົບກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ ກ່ຽວກັບວຽກງານທ່ອງທ່ຽວເປັນຕົ້ນ: ການສຳຫລວດ, ການເກັບກຳຂໍ້ມູນ, ການຄົ້ນຄວ້າ, ຈັດສັນແຫລ່ງທ່ອງທ່ຽວ ແລະ ອະນຸມັດການດຳເນີນທຸລະກິດທ່ອງທ່ຽວ, ອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນຂັ້ນຂອງຕົນ ໃນການຄຸ້ມຄອງ, ຕັກເຕືອນ, ປັບໃໝ, ສັ່ງໂຈະ ຫລື ສະເໜີຍຸບເລີກທຸລະກິດທ່ອງທ່ຽວ;

- ເຊັນສັນຍາ, ອະນຸສັນຍາ ຫລື ບົດບັນທຶກການຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ຈັດຕັ້ງ ຫລື ເຂົ້າຮ່ວມກອງປະຊຸມລະດັບສາກົນ ກ່ຽວກັບວຽກງານທ່ອງທ່ຽວຕາມການອະນຸມັດຂອງລັດຖະບານ;
- ລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ກ່ຽວກັບການຄຸ້ມຄອງ, ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ໃຫ້ແກ່ລັດຖະບານຮັບຊາບຢ່າງເປັນປົກກະຕິ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ ຫລື ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 70. ສິດ ແລະ ໜ້າທີ່ ຂອງພະແນກ ຫລື ຫ້ອງການທ່ອງທ່ຽວ**

ພະແນກ ຫລື ຫ້ອງການທ່ອງທ່ຽວແຂວງ, ນະຄອນ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

- ປະຕິບັດຕາມແຜນການ, ລະບຽບກົດໝາຍ ແລະ ຄຳສັ່ງຕ່າງໆ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາການທ່ອງທ່ຽວ ທີ່ອົງການທ່ອງທ່ຽວແຫ່ງຊາດວາງອອກ;
- ເປັນເຈົ້າການປະສານງານກັບພາກສ່ວນກ່ຽວຂ້ອງ, ລົງສຳຫລວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີ ພ້ອມທັງວາງແຜນປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາແຫລ່ງທ່ອງທ່ຽວທາງວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດໃນຂອບເຂດທີ່ຕົນຮັບຜິດຊອບ;
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າຄຳຮ້ອງຂໍສ້າງຕັ້ງທຸລະກິດການທ່ອງທ່ຽວ ທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້ ຢູ່ທ້ອງຖິ່ນຕົນ ແລ້ວນຳສະເໜີຕໍ່ອົງການທ່ອງທ່ຽວແຫ່ງຊາດ ເພື່ອພິຈາລະນາ ຫລື ອະນຸຍາດດ້ວຍຕົນເອງຕາມການແບ່ງຂັ້ນຄຸ້ມຄອງ;
- ຈັດຕັ້ງຝຶກອົບຮົມບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນຂັ້ນຂອງຕົນ ໃນການຄຸ້ມຄອງ, ຕັກເຕືອນ, ປັບໃໝ, ສັ່ງໂຈະ ຫລື ສະເໜີຍຸບເລີກທຸລະກິດທ່ອງທ່ຽວ;
- ລາຍງານການປະຕິບັດໜ້າທີ່ວຽກງານກ່ຽວກັບການຄຸ້ມຄອງ, ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ໃຫ້ອົງການທ່ອງທ່ຽວແຫ່ງຊາດ ແລະ ອົງການປົກຄອງຂັ້ນແຂວງຢ່າງເປັນປົກກະຕິ;
- ພົວພັນກັບຕ່າງປະເທດໃນວຽກງານທ່ອງທ່ຽວ ຕາມການມອບໝາຍຂອງຂັ້ນເທິງ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ ຫລື ຕາມການມອບໝາຍຂອງ ອົງການທ່ອງທ່ຽວແຫ່ງຊາດ.

**ມາດຕາ 71. ສິດ ແລະ ໜ້າທີ່ ຂອງຫ້ອງການ ຫລື ໜ່ວຍງານທ່ອງທ່ຽວ**

ຫ້ອງການ ຫລື ໜ່ວຍງານທ່ອງທ່ຽວປະຈຳເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

- ຈັດຕັ້ງປະຕິບັດແຜນການ, ລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງ, ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງອົງການທ່ອງທ່ຽວແຫ່ງຊາດ ແລະ ພະແນກ ຫລື ຫ້ອງການ ທ່ອງທ່ຽວ;
- ຄຸ້ມຄອງທຸລະກິດການທ່ອງທ່ຽວໃນຂອບເຂດເມືອງ, ເທດສະບານໃນການດຳເນີນທຸລະກິດໃຫ້ສອດຄ່ອງກັບລະບຽບກົດໝາຍ;
- ສຳຫລວດ, ວາງແຜນກ່ຽວກັບການອະນຸລັກ, ປົກປັກຮັກສາ, ບູລະນະ, ພັດທະນາ, ຄຸ້ມຄອງບັນດາແຫລ່ງທ່ອງທ່ຽວ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານກ່ຽວກັບການທ່ອງທ່ຽວ ໃຫ້ພະແນກ ຫລື ຫ້ອງການທ່ອງທ່ຽວ ແລະ ອົງການປົກຄອງຂັ້ນເມືອງຢ່າງເປັນປົກກະຕິ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ ຫລື ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 72. ສິດ ແລະ ໜ້າທີ່ ຂອງພາກສ່ວນອື່ນໆທີ່ກ່ຽວຂ້ອງ**

ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ທີ່ກ່ຽວຂ້ອງກັບວຽກງານທ່ອງທ່ຽວມີສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການທ່ອງທ່ຽວໃນການຄຸ້ມຄອງ, ການພັດທະນາ ແລະ ການສົ່ງເສີມການທ່ອງທ່ຽວ ຕາມພາລະບົດບາດຂອງຕົນ ເພື່ອເຮັດໃຫ້ວຽກງານທ່ອງທ່ຽວ ຂອງ ສປປ ລາວ ມີການຂະຫຍາຍຕົວ ສາມາດດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ໃຫ້ນັບມື້ນັບຫລາຍຂຶ້ນ.

## ໝວດທີ 2
## ການກວດກາ

**ມາດຕາ 73. ອົງການກວດກາ**

ອົງການກວດກາການທ່ອງທ່ຽວ ແມ່ນອົງການດຽວກັນກັບອົງການຄຸ້ມຄອງການທ່ອງທ່ຽວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 68 ຂອງກົດໝາຍສະບັບນີ້.

**ມາດຕາ 74. ສິດ ແລະ ໜ້າທີ່ ຂອງອົງການກວດກາ**

ອົງການກວດກາການທ່ອງທ່ຽວມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

- ກວດກາການປະຕິບັດແຜນຍຸດທະສາດ, ນະໂຍບາຍ, ແຜນການ, ໂຄງການ ແລະ ລະບຽບກົດໝາຍ ກ່ຽວກັບການທ່ອງທ່ຽວ;
- ກວດກາການດຳເນີນທຸລະກິດທ່ອງທ່ຽວເປັນຕົ້ນ: ກວດກາເອກະສານ ແລະ ລົງກວດກາການເຄື່ອນໄຫວຕົວຈິງຢູ່ກັບທີ່;
- ກວດກາ ການແກ້ໄຂຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທ່ອງທ່ຽວ;
- ປະຕິບັດມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການທ່ອງທ່ຽວ;

- ປະສານສົມທົບກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ ໃນວຽກງານກວດກາກ່ຽວກັບການທ່ອງທ່ຽວ.
- ຜູ້ຖືກກວດກາຕ້ອງໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ກວດກາ.

**ມາດຕາ 75. ຮູບການກວດກາ**

ຮູບການກວດກາ ແບ່ງອອກເປັນ ສາມ ປະເພດດັ່ງນີ້:

- ການກວດກາ ຕາມລະບົບປົກກະຕິ;
- ການກວດກາ ໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ;
- ການກວດກາ ແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການ ທີ່ມີລັກສະນະກວດກາຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງເທື່ອຕໍ່ປີ;

ການກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ເມື່ອຫາກເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຮັບຜິດຊອບໃນການຄຸ້ມຄອງ ຫລື ດຳເນີນກິດຈະການທ່ອງທ່ຽວຮູ້ລ່ວງໜ້າຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 76. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການທ່ອງທ່ຽວ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆຕາມຄວາມເໝາະສົມ.

**ມາດຕາ 77. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງ ຫາກໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ປັບໃໝ ຫລື ລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫລື ໜັກ.

# ພາກທີ X
# ບົດບັນຍັດສຸດທ້າຍ

**ມາດຕາ 78. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 79. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ